ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
ສປປລາວ

**ບົດບັນທຶກກອງປະຊຸມ**
**ຄົບຄະນະຄັ້ງທີ 2 - ສົກປີ 2023**
**ຂອງຄະນະກຳມະການປະສານງານກອງທຶນໂລກ**

ກອງປະຊຸມຄົບຄະນະຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຄັ້ງນີ້ໄດ້ຈັດຂຶ້ນວັນທີ 17 ພຶດສະພາ 2023 ເວລາ 01:30 ຫາ 16:30 ທີ່ຫ້ອງປະຊຸມຊັ້ນ 1 ໂຮງແຮມຄຣາວພລາຊາ ໂດຍການເປັນປະທານຂອງ ທ່ານ ສຈ. ດຣ. ພູທອນ ເມືອງປາກ, ປະທານອົງການກາແດງລາວ ພ້ອມທັງເປັນປະທານ CCM.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ: ສະມາຊິກ ແລະ ຕົວແທນຂອງ CCM ຈຳນວນ 22 ທ່ານ (ມີສິດອອກສຽງໄດ້ 16 ທ່ານ) ແລະ ພາກສ່ວນອື່ນໆຈຳນວນ 34 ທ່ານ ເຊິ່ງຕາງໜ້າຈາກທີມງານກອງທຶນໂລກ, ຄະນະກຳມະການກວດກາຂອງ CCM, ຄະນະກຳມະການຂົນຂວາຍແຫຼ່ງທຶນຂອງ CCM, ກົມແຜນການ ແລະ ການເງິນ (DPF) ກະຊວງສາທາລະນະສຸກ, ຕາງໜ້າຈາກໂຄງການ 3 ພະຍາດ, PR ກະຊວງສາທາລະນະສຸກ, PR-UNOPS, ທີມງານໂຄງການ HANSA, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM ລວມທັງຜູ້ເຂົ້າຮ່ວມຜ່ານທາງອອນລາຍ ລວມທັງໝົດ 56 ທ່ານ.

## ວາລະກອງປະຊຸມ:

1. ທົບທວນແລະພິຈາລະນາເພື່ອຮັບຮອງເອົາຮ່າງເອກະສານຂໍທຶນຂອງໂຄງການ HANSA 2 (PAD) ແລະ ບົດສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ຂອງໂຄງການວັນນະໂລກ/ເຮສໄອວີ.

## ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ປະທານ CCM ໄດ້ຕ້ອນຮັບຢ່າງອົບອຸ່ນ ແລະ ສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ເຂົ້າຮ່ວມໃນຫ້ອງປະຊຸມ ແລະ ເຂົ້າຮ່ວມທາງອອນລາຍ.

ກອງປະຊຸມໄດ້ນຳສະເໜີວາລະກອງປະຊຸມເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ມີຄຳເຫັນ ແລະ ຮັບຮອງເອົາ. ກອງເລຂາ CCM ໄດ້ຢືນຢັນວ່າ ອົງປະກອບຄະນະປະຊຸມແມ່ນພຽງພໍ. ເນື່ອງຈາກວ່າໄດ້ມີວາລະທີ 1 ຂອງກອງປະຊຸມໃນມື້ນີ້ ໄດ້ຮຽກຮ້ອງໃຫ້ສະມາຊິກ CCM ຮັບຮອງ, ແຕ່ໃນນີ້ໄດ້ມີສະມາຊິກ CCM ທີ່ເປັນຕົວແທນມາຈາກທະນາຄານໂລກ ໄດ້ມີຂໍ້ຂັດແຍ້ງທາງດ້ານຜົນປະໂຫຍດ ຊຶ່ງບໍ່ສາມາດລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວນີ້ໄດ້.

ໃນຂະນະດຽວກັນນີ້, ກອງເລຂາ CCM ກໍ່ໄດ້ກ່າວຄຳຂໍໂທດຕໍ່ຜູ້ເຂົ້າຮ່ວມ ກ່ຽວກັບການປ່ຽນແປງວາລະກອງປະຊຸມອັນຮີບດ່ວນ ເຊິ່ງວາລະເກົ່າທີ່ໄດ້ສົ່ງໃຫ້ຜູ້ເຂົ້າຮ່ວມກ່ອນໜ້ານີ້ ປະກອບມີ 3 ຫົວຂໍ້ດັ່ງລຸ່ມນີ້:

1. ທົບທວນ ແລະ ພິຈາລະນາເພື່ອຮັບຮອງເອົາຮ່າງບົດສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ຂອງ ໂຄງການອັນນະໂລກ/ເຣສໄອວີ (ຊຶ່ງລວມຢູ່ໃນເອກະສານຂໍທຶນຂອງໂຄງການ HANSA 2);
2. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຈາກກອງທຶນໂລກ ແລະ ຂະບວນການຂໍທຶນ RAI4E;
3. ລາຍງານຄວາມຄືບໜ້າຂອງການປະເມີນການຈັດຕັ້ງປະຕິບັດຂອງ CCM ອີງຕາມໂຄງຮ່າງ Integrated Performance Framework (IPF) ຂອງກອງທຶນໂລກ.

ເນື່ອງຈາກວ່າ ວາລະທີ 1 ໄດ້ມີການຮຽກຮ້ອງໃຫ້ຄະນະ CCM ເພື່ອທົບທວນ ແລະ ຮັບຮອງ. ວາລະດັ່ງກ່າວໄດ້ເປັນວາລະທີ່ຍາວ ແລະ ໃຊ້ເວລາດົນໃນການທົບທວນ ແລະ ພິຈາລະນາຮັບຮອງ. ສະນັ້ນ ຈຶ່ງໄດ້ຕັດວາລະທີ 2 ແລະ 3 ອອກ ແຕ່ກອງເລຂາ CCM ກໍ່ໄດ້ສົ່ງເອກະສານກ່ຽວກັບ 2 ວາລະດັ່ງກ່າວໃຫ້ຜູ້ເຂົ້າຮ່ວມໝົດແລ້ວ. ພ້ອມດຽວກັນນີ້, ກອງເລຂາ CCM ກໍ່ຍັງໄດ້ລາຍງານຄວາມຄືບໜ້າໃນການປະຕິບັດຜົນຂອງກອງປະຊຸມ CCM ຄັ້ງທີ 1 ວັນທີ 21 ກຸມພາ 2023 ທີ່ຜ່ານມາ ເຊິ່ງກອງປະຊຸມໄດ້ຕົກລົງ ແລະ ຮັບຮອງເອົາດັ່ງລຸ່ມນີ້:

1. ຮັບຮອງເອົາຮ່າງບົດສະເໜີຂໍທຶນຊ່ວຍເຫຼືອຮອບໃໝ່ຈາກກອງທຶນໂລກ ຂອງໂຄງການໄຂ້ຍຸງແຫ່ງຊາດ (RAI4E) ໂດຍສຽງສ່ວນຫຼາຍ ແລະ ກອງເລຂາກໍ່ໄດ້ສົ່ງເອກະສານຕ່າງໆໃຫ້ RSC ສຳເລັດແລ້ວ.
2. ຮັບຮອງເອົາຜົນຂອງການເລືອກຕັ້ງປະທານ ແລະ ຮອງປະທານຄະນະກຳມະການກວດກາຂອງ CCM ຄົນໃໝ່ ແບບເປັນເອກະສັນດັ່ງນີ້:
   - ຮັບຮອງເອົາ ທ່ານ ນາງ ປອ. ດຣ. ຄຳແພງ ຟອງລີຊາ ຕາງໜ້າຈາກສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ເປັນປະທານຄະນະກຳມະການກວດກາຂອງ CCM ຄົນໃໝ່ ແລະ
   - ຮັບຮອງເອົາ Mr. Shortus, Matthew Scott, ຕາງໜ້າຈາກອົງການອະນາໄມໂລກ ເປັນຮອງປະທານຄະນະກຳມະການກວດກາ ຂອງ CCM ຄົນໃໝ່.

## ວາລະທີ 1: ທົບທວນແລະພິຈາລະນາເພື່ອຮັບຮອງເອົາຮ່າງເອກະສານຂໍທຶນຂອງໂຄງການ HANSA 2 (PAD) ແລະ ບົດສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ຂອງໂຄງການ ອັນນະໂລກ/ເຣສໄອວີ

ພາຍຫຼັງທີ່ໄດ້ຮັບຟັງການລາຍງານບົດສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ສົກປີ 2024-2026 ຂອງໂຄງການອັນນະໂລກ/ເຣສໄອວີ ແບບຄົບຊຸດຕໍ່ທີ່ປະຊຸມ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຫັນດີເປັນສ່ວນໃຫຍ່ ແລະ ໄດ້ມີຄຳເຫັນເພີ່ມເຕີມດັ່ງລຸ່ມນີ້:

### ວຽກງານຕ້ານເອດ ແລະ ຄວບຄຸມອັນນະໂລກ:

- ຜູ້ຕາງໜ້າ APL+ ໄດ້ສະເໜີຕໍ່ກອງປະຊຸມວ່າ ບໍ່ເຫັນມີການຈັດສັນງົບປະມານຂອງ CSO ເຂົ້າໃນໂຄງການ HANSA 2 ຢ່າງຈະແຈ້ງ. ສະເໜີໃຫ້ມີການທົບທວນຄືນ ແລະ ຈັດສັນງົບປະມານໃຫ້ CSO ຕາມຄວາມເໝາະສົມເພາະວ່າກຸ່ມເປົ້າໝາຍຕິດເຊື້ອ HIV ເພີ່ມຂຶ້ນ. ນອກຈາກນີ້ ຍັງໄດ້ຮຽກຮ້ອງໃຫ້ທົດລອງຈັດຕັ້ງປະຕິບັດກິດຈະກຳໃດໜຶ່ງທີ່ເປັນຕົວແບບກັບພວກກຸ່ມສ່ຽງ ໂດຍປະຕິບັດຮ່ວມກັບໂຄງການແຫ່ງຊາດ ເພື່ອເປັນການຊຸກຍູ້ໃຫ້ CSO ໄດ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳໃຫ້ຫຼາຍຂຶ້ນ. ຕໍ່ກັບຄຳສະເໜີດັ່ງກ່າວ, ຕາງຫນ້າຈາກ DPF ກໍ່ໄດ້ໃຫ້ຄວາມກະຈ່າງແຈ້ງວ່າ: ບົດສະເໜີສະບັບນີ້ເປັນພາບລວມ ແຕ່ຂັ້ນຕອນຕໍ່ໄປຈະໄດ້ມີການແບ່ງງົບປະມານ, ກິດຈະກຳ ແລະ ໜ້າທີ່ຮັບຜິດຊອບ ຂອງແຕ່ລະພາກສ່ວນຢ່າງລະອຽດ ໂດຍຈະມີຂໍ້ຕົກລົງແຕ່ງຕັ້ງຈາກທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ.
- ປະທານຄະນະກຳມະການກວດກາຂອງ CCM ໄດ້ຍົກຄຳຖາມກ່ຽວກັບ ບັນດາສຸກສາລາທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ HANSA 1 ທີ່ຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີ ໂດຍສະເພາະແມ່ນການເບີກຈ່າຍເງິນແບບ DLI ທາງໂຄງການຈະມີວິທີການປັບປຸງແກ້ໄຂແນວໃດ?. ຕາງຫນ້າຈາກ DPF ກໍ່ໄດ້ຕອບຄຳຖາມວ່າ: ບັນດາສຸກສາລາທີ່

ໄດ້ຈັດຕັ້ງປະຕິບັດແລະໄດ້ຄະແນນຕ່ຳ ຫຼື ຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີນັ້ນ ທາງໂຄງການ HANSA ໄດ້ມີແຜນການປັບປຸງຈຸດອ່ອນຂອງສຸກສາລາແຕ່ລະແຫ່ງແລ້ວ ໂດຍການນຳໃຊ້ທຶນຮອບໃໝ່.

- ຕາງຫນ້າຈາກກອງທຶນໂລກ (GF) ກໍ່ໄດ້ມີຄຳເຫັນແນະນຳດັ່ງລຸ່ມນີ້:
  - ຊຸກຍູ້ການມີສ່ວນຮ່ວມຂອງ CSO ໃຫ້ຫຼາຍຂຶ້ນ; ກິດຈະກຳໃດທີ່ CSO ສາມາດຈັດຕັ້ງປະຕິບັດໄດ້ ກໍ່ມອບໃຫ້ CSO ປະຕິບັດພາຍໃຕ້ແຜນງານແຫ່ງຊາດ ແລະ GF ຈະສືບຕໍ່ເຮັດວຽກກັບ CSOs ຄືກັນກັບໂຄງການ HANSA 1 ທີ່ຜ່ານມາ;
  - ນຳໃຊ້ເຄືອຂ່າຍຂອງ CSO ສຳລັບການຂົນສົ່ງຕົວຢ່າງຂີ້ກະເທີ ເພື່ອເຮັດໃຫ້ມີລະບົບການເຮັດວຽກທີ່ດີ ແລະ ມີປະສິດທິພາບ;
  - ອີງຕາມໜັງສືການຈັດສັນທຶນຊ່ວຍເຫຼືອຈຳນວນເງິນ 15.5 ລ້ານໂດລາ ໄດ້ລະບຸໄວ້ໃນໂຄງການ HANSA 2, ແຕ່ປະຈຸບັນ GF ຍັງບໍ່ທັນໄດ້ຈັດສັນຈຳນວນທີ່ແນ່ນອນໃຫ້ແຕ່ລະອົງປະກອບຂອງວຽກງານ TB ແລະ HIV;
  - ເນື່ອງຈາກວ່າການປະກອບສ່ວນທຶນສົມທົບຂອງລັດຖະບານ (Co-Financing) ເຂົ້າໃນ HANSA1 ຍັງບໍ່ທັນໄດ້ບັນລຸໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງ GF ແລະ ສະເໜີໃຫ້ລັດຖະບານເພີ່ມການລະດົມທຶນພາຍໃນ ແລະ ປະກອບສ່ວນ Co-Financing ໃນໂຄງການ HANSA 2 ເພື່ອບັນລຸຍຸດທະສາດການລົບລ້າງ HIV/AIDS ແລະ TB ໃນປີ 2030. GF ຮຽກຮ້ອງໃຫ້ລັດຖະບານຕ້ອງຮັບປະກັນວ່າຈະສາມາດປະກອບສ່ວນ Co-Financing ໃຫ້ແກ່ໂຄງການທີ່ໄດ້ຮັບການສະຫນັບສະຫນູນຈາກ GF;
  - ງົບປະມານສຳລັບການຈັດຊື້ອຸປະກອນຜະລິດຕະພັນສຸຂະພາບທີ່ສະເໜີໄວ້ໃນ PAAR, NTC ໄດ້ມີການວາງແຜນຈັດຊື້ເຄື່ອງ X-Ray ແນວໃດ?;
  - ມີວິທີການແນວໃດ ສຳລັບການເຊື່ອມສານກິດຈະກຳເຜີຍແຜ່ພາຍໃຕ້ຮູບແບບ PBC ລະຫວ່າງ HIV ແລະ TB ແລະ ກົມອະນາໄມ ແລະ ການສົ່ງເສີມສຸຂະພາບ, ການຮ່ວມມືຂອງວຽກງານ HIV ແລະ TB ໃນການບໍລິການໃຫ້ຄຳປຶກສາດ້ານສຸຂະພາບເຄື່ອນທີ່ໃນໂຄງການ HANSA 2?;
  - ຕາງໜ້າຈາກ CHAS ກໍ່ໄດ້ໃຫ້ຄວາມກະຈ່າງແຈ້ງວ່າ CHAS ໄດ້ມີແຜນການຈັດຕັ້ງປະຕິບັດກິດຈະກຳຢ່າງຄົບຊຸດແຕ່ສູນກາງຮອດທ້ອງຖິ່ນ ເຊັ່ນ: ການສະໜອງເຄື່ອງກວດທີ່ໄດ້ຮັບຜົນໂດຍໄວ, ການເຊື່ອມສານວຽກງານແມ່ແລະເດັກ, ການລາຍງານຂໍ້ມູນດ້ວຍລະບົບ DHIS2 ໃນຂັ້ນຊຸມຊົນ ເຊັ່ນ: ການລຸດຜ່ອນການຈຳແນກ ແລະ ລັງກຽດ ແລະ CLM. ນອກຈາກນີ້ຍັງໄດ້ມີການພັດທະນາລະບົບການຄຸ້ມຄອງນຳອີກ ເຊິ່ງລາຍລະອຽດດ້ານການຄຸ້ມຄອງ, ການຈັດສັນງົບປະມານ ແລະ ການຈັດຕັ້ງປະຕິບັດກິດຈະກຳຕົວຈິງ ແມ່ນຈະໄດ້ປຶກສາຫາລືນຳກັນອີກ.
- ປະທານ CCM ໄດ້ປະກອບຄຳຄິດຄຳເຫັນຕໍ່ຮ່າງເອກະສານໂຄງການ HANSA 2 - PAD ແລະ ບົດສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ຂອງວຽກງານ TB/HIV ແມ່ນໄດ້ສອດຄ່ອງກັບຍຸດທະສາດຂອງກະຊວງສາທາລະນະສຸກແລ້ວບໍ່ ແລະ ຈະສາມາດບັນລຸໄດ້ແທ້ບໍ່ ເຊັ່ນ: ການດູແລສຸຂະພາບຂັ້ນຕົ້ນແມ່ນພື້ນຖານສຳລັບການເຂົ້າເຖິງການຄຸ້ມຄອງສຸຂະພາບສາກົນ, ຍຸດທະສາດຂອງແຜນງານ HIV/AIDs, ຍຸດທະສາດຂອງແຜນງານ TB ໃນການຄວບຄຸມ ແລະ ການຍຸຕິການແຜ່ລະບາດຂອງພະຍາດ. ຕໍ່ກັບຄຳຖາມດັ່ງກ່າວ, ຕາງຫນ້າຈາກ DPF ກໍ່ໄດ້ໃຫ້ຄວາມກະຈ່າງແຈ້ງວ່າ:
  - ການວາງແຜນໂຄງການ HANSA 2 ແມ່ນໄດ້ພິຈາລະນາໃຫ້ສອດຄ່ອງໄປຕາມ 5 ອົງປະກອບ ແລະ ອີງຕາມແຜນຍຸດທະສາດ 5 ປີ ຂອງກະຊວງສາທາລະນະສຸກ (ເຊັ່ນ: ຍົກສູງຄຸນນະພາບການບໍລິການ, ເສີມສ້າງຄວາມເຂັ້ມແຂງດ້ານການເງິນສາທາລະນະສຸກ, ປັບປຸງລະບົບຂໍ້ມູນຂ່າວສານດ້ານສາທາລະນະສຸກໃຫ້ຖືກຕ້ອງ ແລະ ທັນການ, ການສ້າງແລະເສີມສ້າງຊັບພະຍາກອນມະນຸດ, ການຄຸ້ມຄອງ ແລະ ບໍລິຫານ) ແລະ ເປົ້າໝາຍການພັດທະນາແບບຍືນຍົງ SDGs;
  - ເຫັນດີໃນການຈັດສັນງົບປະມານ ແຕ່ງົບປະມານຫຼາຍເກີນ ຈຳເປັນຈະຕ້ອງໄດ້ຈັດກອງປະຊຸມ ຮ່ວມກັບບັນດາກົມທີ່ກ່ຽວຂ້ອງ ເພື່ອປຶກສາຫາລືກ່ຽວກັບການຈັດສັນງົບປະມານຄືນໃໝ່;
  - ບາງຄັ້ງການປະກອບສ່ວນ Co-Financing ເຂົ້າໃນໂຄງການ HANSA 1 ແມ່ນຊັກຊ້າເນື່ອງຈາກກົນໄກ ແລະ ຂັ້ນຕອນການອະນຸມັດທຶນ. ດັ່ງນັ້ນ, ການປະກອບສ່ວນ Co-Financing ເຂົ້າໃນໂຄງການ HANSA

2 ຈະເອົາໄດ້ເອົາໄປນຳໃຊ້ເຂົ້າໃນການຈັດກອງປະຊຸມປຶກສາຫາລື, ການພັດທະນາແຜນຍຸດທະສາດແຫ່ງຊາດ, ຄູ່ມື ແລະ ນິຕິກຳຕ່າງໆ ແທນທີ່ຈະເອົາໄປສຸມໃສ່ການຈັດຊື້ຢາ ແລະ ຜະລິດຕະພັນສຸຂະພາບທີ່ຈຳເປັນຄືກັບ HANSA 1.

- CSO ສະເໜີ NTC ພິຈາລະນາໃຫ້ CSO ໄດ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳການເກັບຂໍ້ກະເທີ ຂັ້ນຊຸມຊົນໃຫ້ຫຼາຍຂຶ້ນ;
- ກ່ຽວກັບການສະເໜີຂອງ CSO ທີ່ຢາກໃຫ້ຄັດຕິດກິດຈະກຳທີ່ເປັນບູລິມະສິດ ເຂົ້າໄປໃນບົດສະເໜີໂຄງການ HANSA 2 – PAD ໄດ້ບໍ່; ປະທານ CCM ແລະ ຕາງໜ້າຈາກ DPF ໄດ້ແນະນຳໃຫ້ CSO ໄປປຶກສາຫາລືກັບ ບັນດາສູນ ແລະ ກົມທີ່ກ່ຽວຂ້ອງສາກ່ອນ ເພື່ອຫາວິທີໃນການປະກອບເອກະສານຂັ້ນຕອນຕໍ່ໄປ;
- ພາຍຫຼັງທີ່ໄດ້ຮັບຟັງການສະເໜີຈາກຜູ້ຕາງໜ້າ CLE ກ່ຽວກັບທຶນ Matching Fund, ທີ່ປຶກສາດ້ານວິຊາການ ຈາກ CHAS ກໍ່ໄດ້ໃຫ້ຄວາມກະຈ່າງແຈ້ງກ່ຽວກັບທຶນ Matching Fund ວ່າ: Matching Fund ແມ່ນທຶນ ພິເສດຈາກກອງທຶນໂລກທີ່ຈະສະໜັບສະໜູນເພີ່ມເຕີມຈຳນວນ 15 ລ້ານໂດລາສະຫະລັດ ນອກຈາກທີ່ໄດ້ຮັບທຶນ ທີ່ກອງທຶນໂລກໄດ້ຈັດສັນໃຫ້ແລ້ວ (Allocated Fund) ແຕ່ ສປປ ລາວ ສາມາດຍື່ນບົດສະເໜີຂໍທຶນດັ່ງກ່າວ ປະມານ 2 ລ້ານໂດລາ ເພື່ອນຳໃຊ້ເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການວິເຄາະແບບເຊື່ອມສານ. ເງື່ອນໄຂການຍື່ນບົດສະເໜີຂໍທຶນດັ່ງກ່າວນີ້, ລັດຖະບານຈະຕ້ອງໄດ້ສົມທົບ Co-Financing ຈຳນວນ 2 ລ້ານໂດລາສະຫະລັດ; ແຕ່ອີງໃສ່ການຈັດຕັ້ງປະຕິບັດຕົວຈິງດ້ານງົບປະມານຂອງ CLE ໃນປະຈຸບັນເຫັນວ່າ Co-Financing ແມ່ນມີພຽງພໍແລ້ວ ແລະ ຖືວ່າແທດເໝາະ ແລະ ມີເງື່ອນໄຂທີ່ຈະໄດ້ຮັບທຶນ Matching Fund ແຕ່ຕ້ອງຂຶ້ນກັບການພິຈາລະນາຈາກກອງທຶນໂລກ.
- ນອກຈາກນີ້ ທີ່ປຶກສາດ້ານວິຊາການຈາກ CHAS ກໍ່ຍັງໄດ້ໃຫ້ຄວາມກະຈ່າງແຈ້ງອີກວ່າ: PAAR ແມ່ນທຶນເພີ່ມເຕີມຈາກກອງທຶນໂລກທີ່ຈະສະໜັບສະໜູນເພີ່ມເຕີມນອກຈາກ Allocated Fund. PAAR ແມ່ນທຶນສະເພາະ ເພື່ອຈະນຳໃຊ້ສຳລັບຈັດຕັ້ງປະຕິບັດບັນດາກິດຈະກຳທີ່ເປັນບູລິມະສິດທີ່ Allocated Fund ບໍ່ສາມາດຈັດສັນ ງົບປະມານໃຫ້ພຽງພໍ. ກອງທຶນໂລກໄດ້ໃຫ້ແຈ້ງໃຫ້ຮູ້ວ່າ ສຳລັບທຶນ PAAR ແມ່ນຍັງບໍ່ທັນມີໃນຕອນນີ້ ແລະ ຍັງ ໄດ້ແນະນຳໃຫ້ CHAS ແລະ NTC ກະກຽມແລະຍື່ນບົດສະເໜີຂໍທຶນດັ່ງກ່າວໃຫ້ໄດ້ລົງທະບຽນໄວ້ຢ່າງເປັນທາງການ ເພື່ອໃຫ້ກອງທຶນໂລກພິຈາລະນາໃນເມື່ອມີທຶນ PAAR.

**ການທົບທວນ ແລະ ຮັບຮອງ:**

- ຫຼັງຈາກທີ່ໄດ້ດຳເນີນການສົນທະນາຢ່າງກວ້າງຂວາງ ແລະ ກອງປະຊຸມກໍ່ໄດ້ເປີດກ້ວາງໃນການລົງຄະແນນສຽງ. ສຸດທ້າຍ, ສະມາຊິກ CCM ກໍ່ໄດ້ຮັບຮອງເອົາຮ່າງເອກະສານຂອງໂຄງການ HANSA 2 -PAD ແລະ ບົດສະເໜີ ຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ສົກປີ 2024-2026 ຂອງໂຄງການວັນນະໂລກ/ເຮສໄອວີ ແບບຄົບຊຸດ ໂດຍສຽງສ່ວນຫຼາຍ. ປະທານ CCM ໄດ້ມອບໃຫ້ບັນດາສູນທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມງານສືບຕໍ່ເຮັດວຽກ ເພື່ອໃຫ້ສຳເລັດ ແລະ ສົ່ງໃຫ້ກອງທຶນໂລກທັນເວລາຕາມທີ່ໄດ້ກຳນົດໄວ້.

ກ່ອນຈະປິດກອງປະຊຸມ ທ່ານປະທານກອງປະຊຸມ ໄດ້ສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນ ມາຍັງຜູ້ເຂົ້າຮ່ວມທັງໝົດໃນຫ້ອງປະຊຸມ ແລະ ທັງອອນລາຍ. ກອງປະຊຸມຄັ້ງນີ້ໄດ້ສຳເລັດ ແລະ ປິດລົງໃນເວລາ 16:35.

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2023

| | |
|---|---|
| **ປະທານກອງປະຊຸມ** | **ຜູ້ສັງລວມເນື້ອໃນກອງປະຊຸມ** |
| ທ່ານ ສຈ. ດຣ. ພູທອນ ເມືອງປາກ<br>ປະທານ ອົງການກາແດງລາວ,<br>ປະທານ CCM | ທ່ານ ບຸດສາລີ ລັດຕະນະ<br>ຜູ້ປະສານງານ ແລະ ການເງິນ<br>ກອງເລຂາ CCM |